ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ I ປະຈຳປີ 2021




ກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2021 ໄດ້ຈັດຂຶ້ນເປັນເວລາເຄິ່ງວັນໃນຕອນເຊົ້າຂອງວັນທີ 25 ສິງຫາ 2021 ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ທະນາຄານແຫ່ງ ສປປ ລາວ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ, ປະທານສະພາບໍລິຫານ ທຫລ ແລະ ມີຮອງປະທານ-ຄະນະກຳມະການສະພາບໍລິຫານ ທຫລ, ຄະນະຜູ້ວ່າການ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ແມ່ນປະຕິບັດຕາມລະບອບການປະຊຸມຂອງສະພາບໍລິຫານທະນາຄານແຫ່ງ ສປປ ລາວ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ), ເພື່ອສະຫຼຸບການຈັດຕັ້ງປະຕິບັດວຽກງານ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2021. ພ້ອມນີ້, ກໍມີບາງບັນຫາວຽກງານທີ່ປິ່ນອ້ອມອື່ນໆຈຳນວນໜຶ່ງ ເພື່ອໃຫ້ສະພາບໍລິຫານພິຈາລະນາຮັບຮອງ. ກອງປະຊຸມໄດ້ຮັບຟັງການລາຍງານການເຄື່ອນໄຫວວຽກງານທະນາຄານແຫ່ງ ສປປ ລາວ 6 ເດືອນ ຕົ້ນປີ 2021 ແລະ ທິດທາງແຜນການ 6 ເດືອນ ທ້າຍປີ 2021, ການລາຍງານການປະຕິບັດແຜນເງິນຕາ 6 ເດືອນ ຕົ້ນປີ 2021 ແລະ ທິດທາງແຜນການ 6 ເດືອນ ທ້າຍປີ 2021, ລາຍງານແຜນການຈັດຕັ້ງປະຕິບັດແຜນງົບປະມານ 6 ເດືອນ ຕົ້ນປີ 2021 ແລະ ການດັດແກ້

ແຜນງົບປະມານ 6 ເດືອນ ທ້າຍປີ 2021 ຂອງ ທຫລ. ພ້ອມນີ້, ກໍໄດ້ຮັບຟັງການລາຍງານຄືບຄວາມຄືບໜ້າກ່ຽວກັບການປັບປຸງໂຄງສ້າງຂອງທະນາຄານສະເພາະກິດ (ທະນາຄານນະໂຍບາຍ), ທະນາຄານທຸລະກິດລັດ 2 ແຫ່ງ (ທະນາຄານສົ່ງເສີມກະສິກຳ ແລະ ທະນາຄານພັດທະນາລາວ), ການເຂົ້າຄວບຄຸມທະນາຄານລາວ-ກໍ່ສ້າງ; ການລາຍງານຄືບກ່ຽວກັບການສະເໜີແຕ່ງຕັ້ງຄະນະກຳມະການນະໂຍບາຍເງິນຕາ ແລະ ຄະນະກຳມະການນະໂຍບາຍເງິນຕາ. ຫຼັງຈາກນັ້ນ, ທີ່ປະຊຸມກໍໄດ້ມີການຄົ້ນຄວ້າ ແລະ ປະກອບຄວາມຄິດຄວາມເຫັນຢ່າງກົງໄປກົງມາ.




ທ່ານ ສອນໄຊ ສິດພະໄຊ ປະທານສະພາບໍລິຫານ ທຫລ ໄດ້ຕີລາຄາສູງຕໍ່ກອງປະຊຸມໃນຄັ້ງນີ້ ແລະ ຍ້ອງຍໍຊົມເຊີຍຕໍ່ການຍົກສູງຄວາມຮັບຜິດຊອບຂອງສະມາຊິກສະພາບໍລິຫານ ແລະ ຈະນຳເອົາບັນດາຄຳຄິດເຫັນເຫຼົ່ານັ້ນໄປຄົ້ນຄວ້າ, ປັບປຸງ ແລະ ຈັດຕັ້ງປະຕິບັດເຂົ້າສູ່ວຽກງານຕົວຈິງໃຫ້ເລິກເຊິ່ງດີຂຶ້ນກວ່າເກົ່າ.

**#**ຂ່າວ ແລະ ພາບ: ນາງ ປາໄນ ພັນທະລາ

ຢູ່ເມືອງລາວ ໃຊ້ແຕ່ເງິນກີບ